ສຳນັກງານ ຄຄຊ
ລົງ ເລກທີ 250
ວັນທີ 5.3.15
ໂທລະສັບ 021 217770

d:\sisouphan (to) 2015\report3\learning chinese 300 sentences.docx

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----===000===----

ທະນາຄານແຫ່ງ ສປປ ລາວ

ກົມຈັດຕັ້ງແລະພະນັກງານ

ເລກທີ 51 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 05 MAR 2015

# ແຈ້ງການ

**ເຖິງ:** ທ່ານ ຫົວໜ້າ ສຳນັກງານ ຄຄຊ ທີ່ນັບຖື.

**ເລື່ອງ:** ການເຂົ້າຮ່ວມຝຶກອົບຮົມຂອງພະນັກງານທະນາຄານແຫ່ງ ສປປ ລາວ.

- ອີງຕາມໜັງສືລາຍງານຂອງກົມພົວພັນສາກົນ ສະບັບເລກທີ 95/ກພສ ລົງວັນທີ 18/02/2015;
- ອີງໃສ່ຜົນການເຂົ້າຮ່ວມຝຶກອົບຮົມຢູ່ ສູນຝຶກອົບຮົມ ລາວ-ສິງກະໂປ ໃນໄລຍະຜ່ານມາ.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ໃນໄລຍະຜ່ານມາ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ນຳສົ່ງພະນັກງານເຂົ້າຮ່ວມຝຶກອົບຮົມຢູ່ບັນດາສະຖາບັນຕ່າງໆທັງພາຍໃນ ແລະ ຕ່າງປະເທດດ້ວຍທຶນ ທຫລ ເອງ ແລະ ທຶນຂອງພາກສ່ວນກ່ຽວຂ້ອງອື່ນໆເປັນຈຳນວນຫຼາຍສົມຄວນ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວໄດ້ເຮັດໃຫ້ພະນັກງານຂອງ ທຫລ ມີຄວາມຮູ້ຄວາມສາມາດເພີ່ມຂຶ້ນ ສາມາດຄັບເຄື່ອນວຽກງານໄດ້ລະດັບທີ່ແນ່ນອນ. ຄຽງຄູ່ກັບໝາກຜົນທີ່ຍາດມາໄດ້ດັ່ງກ່າວ, ກໍ່ຍັງມີພະນັກງານຈຳນວນໜຶ່ງບໍ່ທັນເອົາໃຈໃສ່ເຊີດຊູຄວາມຮັບຜິດຊອບ ໃນເວລາໄປເຂົ້າຮ່ວມການຝຶກອົບຮົມໂດຍສະເພາະການຝຶກອົບຮົມຢູ່ສູນຝຶກອົບຮົມ ລາວ-ສິງກະໂປ ຍັງບໍ່ເຕັມເມັດເຕັມໜ່ວຍ (ຂາດຮຽນ), ບໍ່ຕັ້ງໃຈຮ່ຳຮຽນສົ່ງຜົນໃຫ້ປະສິດທິຜົນໃນການຮຽນຮູ້ ແລະ ການນຳເອົາຄວາມຮູ້ມາຜັນຂະຫຍາຍເຂົ້າໃນວຽກງານຕົວຈິງຍັງບໍ່ທັນສູງແທ້; ບັນຫາດັ່ງກ່າວໄດ້ຖືກພາກສ່ວນກ່ຽວຂ້ອງໃຫ້ການສົ່ງຂ່າວຕໍ່ການຈັດຕັ້ງທີ່ນຳສົ່ງພະນັກງານຂອງຕົນເຂົ້າຮ່ວມ. ສະນັ້ນ, ເພື່ອຮັບປະກັນໃຫ້ການເຂົ້າຮ່ວມຝຶກອົບຮົມໃນຕໍ່ໜ້າມີປະສິດທິຜົນຍິ່ງຂຶ້ນ ຈຶ່ງແຈ້ງມາຍັງທ່ານເພື່ອເປັນເຈົ້າການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານທີ່ຖືກຄັດເລືອກໄປເຂົ້າຮ່ວມການຝຶກອົບຮົມຕ່າງໆທັງພາຍໃນ ແລະ ຕ່າງປະເທດ ໃຫ້ເຊີດຊູຄວາມຮັບຜິດຊອບ ແລະ ເອົາໃຈໃສ່ໃນການຄົ້ນຄວ້າຮ່ຳຮຽນໃຫ້ເຕັມເມັດເຕັມໜ່ວຍ, ຫຼີກເວັ້ນການຂາດຮຽນຖ້າບໍ່ຈຳເປັນ. ນອກນັ້ນ, ພາຍຫຼັງສຳເລັດການເຂົ້າຮ່ວມຝຶກອົບຮົມແລ້ວກໍ່ໃຫ້ເປັນເຈົ້າການໃນການລາຍງານຄວາມຮັບຮູ້ທີ່ແຕ່ລະຄົນໄດ້ຮັບໃຫ້ການຈັດຕັ້ງກ່ຽວຂ້ອງຮັບຊາບ ແລະ ເຜີຍແຜ່ບົດຮຽນໃຫ້ໝູ່ຄະນະຕາມລະບຽບການທີ່ກຳນົດໃນເວລາອັນຄວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວຢ່າງເຂັ້ມງວດ.

ຫົວໜ້າກົມຈັດຕັ້ງແລະພະນັກງານ

ບຸນຕາ ດາຣາວົ

PA
- ປ.ກຄ
6/3 2015